ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ
ກົມຂົນສົ່ງ

ເລກທີ . 0378.52. . /ຍທຂ.ກຂສ
ນະຄອນຫຼວງວຽງຈັນ, ວັນທີ. 16. ເມສາ. 2020

# ແຈ້ງການ

ຮຽນ: ທ່ານ ຫົວໜ້າພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ທີ່ນັບຖື

ເລື່ອງ: ວິທີການແກ້ໄຂ ການຂົນສົ່ງສິນຄ້າ ຢູ່ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ

- ອີງຕາມ ຄໍາສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29/03/2020 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແບ່ງຄວາມຮັບຜິດຊອບພາຍໃນ ຂອງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ສະບັບເລກທີ 023/ສພກ, ລົງວັນທີ 06/04/2020;
- ອີງຕາມ ບົດແນະນໍາ ຂອງ ກະຊວງ ຍທຂ ສະບັບເລກທີ 266/ຍທຂ, ລົງວັນທີ 11/04/2020;
- ອີງຕາມ ການຊີ້ນໍາ ຂອງທ່ານຫົວໜ້າວຽກງານການກວດກາ ແລະ ອໍານວຍຄວາມສະດວກໃຫ້ແກ່ການຂົນສົ່ງສິນຄ້າ ພາຍໃນ ແລະ ເຂົ້າ-ອອກ ປະເທດ ລົງວັນທີ 15/04/2020.

ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະ ຂົນສົ່ງ ຂໍແຈ້ງມາຍັງທ່ານຊາບວ່າ: ຜ່ານການຈັດຕັ້ງປະຕິບັດ ບົດແນະນໍາ ຂອງ ກະຊວງ ຍທຂ ສະບັບເລກທີ 266/ຍທຂ, ລົງວັນທີ 11/04/2020 ເຫັນວ່າ ສາມາດແກ້ໄຂບັນຫາລົດຂົນສົ່ງ ສິນຄ້າ ພາຍໃນ ແລະ ເຂົ້າ-ອອກ ສປປ ລາວ ໄດ້ດີສົມຄວນ. ສາມາດປ້ອງກັນການແຜ່ລະບາດ ຂອງພະຍາດ COVID-19 ແລະ ເຮັດໃຫ້ຜູ້ປະກອບການຂົນສົ່ງ ຂອງ ສປປ ລາວ ໄດ້ຮັບຜົນປະໂຫຍດ ຢ່າງຫຼວງຫຼາຍ, ສາມາດແກ້ໄຂບັນຫາ ລົດຂົນສົ່ງ ຂອງ ຕ່າງປະເທດ ຕີເປົ່າເຂົ້າມາຮັບເອົາສິນຄ້າ, ສ້າງໂອກາດໃນການຊຸກຍູ້ສົ່ງເສີມ, ສ້າງວຽກເຮັດງານທໍາ ແລະ ເຕົ້າໂຮມປັບປຸງ ກໍາລັງການຂົນສົ່ງພາຍໃນໃຫ້ເຂັ້ມແຂງຂຶ້ນກ່ວາເກົ່າ. ເຖິງຢ່າງໃດກໍ່ຕາມ, ໃນສະພາບປັດຈຸບັນ ເຫັນວ່າ ກໍາລັງລົດຂົນສົ່ງ ແລະ ລົດຂົນສົ່ງວິຊາສະເພາະຈໍານວນໜຶ່ງ ຂອງ ສປປ ລາວ ຍັງຈໍາກັດ ແລະ ບໍ່ທັນພຽງພໍກັບຄວາມຮຽກຮ້ອງຕ້ອງການຕົວຈິງ ຈຶ່ງເຮັດ ໃຫ້ມີຜູ້ປະກອບການຂົນສົ່ງ ສະເໜີວິທີການແກ້ໄຂ ໃນການເຊົ່ານໍາໃຊ້ ລົດຂົນສົ່ງ ຂອງຕ່າງປະເທດ, ວິທີການຄ່ຽນຖ່າຍ ແລະ ການສັບປ່ຽນຫົວລາກ-ຫາງລາກ ແຕ່ຕ້ອງນໍາໃຊ້ ໃຫ້ສອດຄ່ອງ ແລະ ຖືກຕ້ອງຕາມລະບຽບການ ແລະ ເຕັກນິກ. ດັ່ງນັ້ນ, ເພື່ອສືບຕໍ່ອໍານວຍຄວາມສະດວກ ແກ່ບັນດາຜູ້ປະກອບການຂົນສົ່ງສິນຄ້າພາຍໃນ, ແນໃສ່ ສ້າງຄວາມເຂັ້ມແຂງແກ່ທຸລະກິດ ພາຍໃນ, ກົມຂົນສົ່ງ ຈຶ່ງແຈ້ງໃຫ້ບັນດາພະແນກ ຍທຂ ນະຄອນຫຼວງວຽງຈັນ, ບັນດາແຂວງ ແລະ ຜູ້ປະກອບການຂົນສົ່ງ ແລະ ຈັດສົ່ງ ສິນຄ້າ ປະຕິບັດດັ່ງນີ້:

1. ໃຫ້ພະແນກ ຍທຂ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ຊຸກຍູ້ ຜູ້ປະກອບການຂົນສົ່ງ ແລະ ຈັດສົ່ງ ສິນຄ້າ ຂອງ ສປປ ລາວ ເພື່ອ ລະດົມ ແລະ ເຕົ້າໂຮມ ກໍາລັງການຂົນສົ່ງ ເພື່ອໃຫ້ມີຄວາມພ້ອມ ໃນການສະໜັບສະໜູນການຂົນສົ່ງສິນຄ້າ ເຂົ້າ-ອອກ ສປປ ລາວ ໃຫ້ພຽງພໍ ແລະ ມີປະສິດທິພາບ;

2. ໃຫ້ບໍລິສັດຂົນສົ່ງສິນຄ້າ ຂອງ ສປປ ລາວ ສາມາດ ນຳໃຊ້ ລົດຂົນສົ່ງ ຂອງຕ່າງປະເທດ ໂດຍການເຊົ່າເຂົ້າມາ ເພື່ອແກ້ໄຂ ໃນຊ່ວງວິກິດນີ້ ເພື່ອການຂົນສົ່ງສິນຄ້າ ແຕ່ໃຫ້ນຳໃຊ້ ຄົນຂັບລົດຄົນລາວ ເທົ່ານັ້ນ ແລະ ໃຫ້ມີການຄ້ຳປະກັນໄພ ກົມພາສີ ໃນການນຳເຂົ້າຊົ່ວຄາວ ຂອງ ລົດບັນທຸກ, ຫາງລາກ ແລະ ຕູ້ຄອນເທັນເນີ ເພື່ອສາມາດຕິດຕາມ ກວດກາໄດ້;

3. ການນຳເຂົ້າລົດຂົນສົ່ງສິນຄ້າ ໃນໄລຍະຮີບດ່ວນນີ້ ແມ່ນສາມາດເຮັດໜັງສືຄ້ຳປະກັນໄພກົມພາສີກ່ອນ ຈຶ່ງດຳເນີນ ເອກະສານຕາມ ຂັ້ນຕອນນຳເຂົ້າ ຢ່າງຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ ເພື່ອລົບລ້າງສັນຍາ ຄ້ຳປະກັນຕາມພາຍຫຼັງ;

4. ໃຫ້ຍົກຖ່າຍຕູ້ຄ້ອນເທັນເນີ ຫລື ການສັບປ່ຽນຫົວລາກ - ຫາງລາກ (Trailer Swapping) ເພື່ອມາສົ່ງ ແລະ ຮັບເອົາ ສິນຄ້າ ຢູ່ໃນ ສປປ ລາວ;

5. ບໍລິສັດ ທີ່ຈະມາດຳເນີນການຂົນສົ່ງ, ຈັດສົ່ງ, ຍົກຖ່າຍ, ສັບປ່ຽນຫົວລາກ-ຫາງລາກ ເຊົ່າລົດຕ່າງປະເທດ ມາຂົນສົ່ງ ສິນຄ້າ ລະຫວ່າງປະເທດ ແລະ ຜ່ານແດນ ຕ້ອງແມ່ນບໍລິສັດ ທີ່ຂຶ້ນທະບຽນວິສາຫະກິດ ແລະ ໄດ້ຮັບອະນຸຍາດ ດຳເນີນ ທຸລະກິດ ໃນການຂົນສົ່ງ ແລະ ຈັດສົ່ງສິນຄ້າ ຢູ່ ສປປ ລາວ ເທົ່ານັ້ນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອປະສານກັບພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດແຈ້ງການນີ້ໃຫ້ໄດ້ຮັບຜົນດີດ້ວຍ.

**ຫົວໜ້າກົມ**

ທອ. ບຸນຕາ ອ່ອນນາວົງ

**ບ່ອນສົ່ງ:**

| | |
|---|---|
| - ຄະນະສະເພາະກິດ COVID-19 ສູນກາງ | 1 ສະບັບ |
| - ຄະນະສະເພາະກິດ COVID-19 ນະຄອນຫລວງວຽງຈັນ ແລະ ບັນດາແຂວງ | 1 ສະບັບ |
| - ດ່ານຊາຍແດນສາກົນທົ່ວປະເທດ | 1 ສະບັບ |
| - ກົມພາສີ, ກະຊວງການເງິນ | 1 ສະບັບ |
| - ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ | 1 ສະບັບ |
| - ສະມາຄົມຜູ້ຂົນສົ່ງ ແລະ ຈັດສົ່ງສິນຄ້າ ລະຫວ່າງປະເທດ ຂອງ ສປປ ລາວ (LITFA) | 1 ສະບັບ |